ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 287 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 07 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຜະລິດ**
**ທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 059/ສພຊ, ລົງວັນທີ 30 ຕຸລາ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 023/ຄປຈ, ລົງວັນທີ 24 ພະຈິກ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 059 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 / 10 / 17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປົກປ້ອງຜູ້ຜະລິດ ທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງ ກົດໝາຍວ່າດ້ວຍການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ໃນວາລະກອງປະຊຸມ ຄັ້ງວັນທີ 30 ຕຸລາ 2017.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 27 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 ຕຸລາ 2017

# ກົດໝາຍ
# ວ່າດ້ວຍການປົກປ້ອງຜູ້ຜະລິດ
# ທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາ ວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ ແນໃສ່ເຮັດໃຫ້ຜູ້ຜະລິດສິນຄ້າພາຍໃນໄດ້ປັບປຸງຕົນເອງ ໃຫ້ມີຄວາມເຂັ້ມແຂງ, ເຕີບໃຫຍ່ ຂະຫຍາຍຕົວ ແລະ ສາມາດແຂ່ງຂັນກັບການນຳເຂົ້າສິນຄ້າ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ**

ການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ແມ່ນ ການນຳໃຊ້ມາດຕະການທາງດ້ານພາສີ ຫຼື ການກຳນົດປະລິມານການນຳເຂົ້າໃນໄລຍະເວລາໃດໜຶ່ງ ເພື່ອປົກປ້ອງຜູ້ຜະລິດສິນຄ້າພາຍໃນທີ່ໄດ້ຮັບຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ມີໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍຈາກການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຜະລິດສິນຄ້າພາຍໃນ** ໝາຍເຖິງ ຜູ້ຜະລິດສິນຄ້າອຸດສາຫະກຳ ແລະ ກະສິກຳ ຫຼື ສິນຄ້າປະເພດອື່ນໃນ ສປປ ລາວ ທີ່ຜະລິດສິນຄ້າທີ່ຄ້າຍຄືກັນ ຫຼື ແຂ່ງຂັນໂດຍກົງກັບສິນຄ້ານຳເຂົ້າ ຫຼື ຜູ້ຜະລິດທີ່ມີຜົນຜະລິດລວມ ປະກອບເປັນອັດຕາສ່ວນທີ່ສຳຄັນຂອງຜົນຜະລິດສິນຄ້າພາຍໃນທັງໝົດ;
2. **ສິນຄ້າທີ່ຄ້າຍຄືກັນ** ໝາຍເຖິງ ສິນຄ້າທີ່ມີຄຸນລັກສະນະສະເພາະພື້ນຖານທີ່ຄືກັນ ຫຼື ຄ້າຍຄືກັນກັບສິນຄ້າທີ່ຜະລິດໃນ ສປປ ລາວ ເປັນຕົ້ນ ການປະຕິບັດງານ, ການນຳໃຊ້, ຄຸນນະພາບ, ອົງປະກອບດ້ານເຕັກນິກ ແລະ ຢູ່ໃນກຸ່ມສິນຄ້າປະເພດດຽວກັນ;

3. **ສິນຄ້າທີ່ແຂ່ງຂັນໂດຍກົງ** ໝາຍເຖິງ ສິນຄ້າອຸດສາຫະກຳ ແລະ ສິນຄ້າກະສິກຳນຳເຂົ້າ ທີ່ສາມາດໃຊ້ປ່ຽນແທນສິນຄ້າທີ່ຜະລິດພາຍໃນ;

4. **ການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນ** ໝາຍເຖິງ ການນຳເຂົ້າສິນຄ້າປະເພດໃດໜຶ່ງໃນປະລິມານທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍແບບເດັດຖານ ຫຼື ທຽບຖານ ໂດຍປຽບທຽບກັບປະລິມານສິນຄ້າທີ່ຄ້າຍຄືກັນ ຫຼື ສິນຄ້າທີ່ແຂ່ງຂັນໂດຍກົງທີ່ຜະລິດໃນ ສປປ ລາວ;

5. **ຜູ້ມີສ່ວນກ່ຽວຂ້ອງ** ໝາຍເຖິງ ຜູ້ຜະລິດ, ຜູ້ສົ່ງອອກ ຫຼື ຜູ້ນຳເຂົ້າສິນຄ້າ ແລະ ລັດຖະບານຂອງປະເທດສົ່ງອອກສິນຄ້າທີ່ສ້າງຄວາມເສຍຫາຍ ຕໍ່ຜູ້ຜະລິດສິນຄ້າພາຍໃນ ທີ່ຜະລິດສິນຄ້າທີ່ຄ້າຍຄືກັນ ຫຼື ສິນຄ້າທີ່ແຂ່ງຂັນໂດຍກົງກັບສິນຄ້ານຳເຂົ້າ, ກຸ່ມ, ສະມາຄົມ ຫຼື ການຈັດຕັ້ງທີ່ເປັນຕົວແທນປົກປ້ອງຜົນປະໂຫຍດຂອງຜູ້ຜະລິດສິນຄ້າພາຍໃນ;

6. **ປະລິມານການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນແບບເດັດຖານ ຫຼື ທຽບຖານ** ໝາຍເຖິງ ປະລິມານການນຳເຂົ້າທີ່ເພີ່ມຂຶ້ນຕາມອັດຕາສ່ວນຮ້ອຍ ຫຼື ປະລິມານໂດຍປຽບທຽບລະຫວ່າງປະລິມານການນຳເຂົ້າກັບປະລິມານການຜະລິດພາຍໃນປະເທດ;

7. **ຄວາມເສຍຫາຍຢ່າງຫຼວງຫຼາຍ** ໝາຍເຖິງ ຄວາມເສຍຫາຍທີ່ເກີດຂຶ້ນຈາກຜົນກະທົບຢ່າງຮ້າຍແຮງໂດຍລວມ ຕໍ່ຜູ້ຜະລິດສິນຄ້າພາຍໃນ;

8. **ໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ** ໝາຍເຖິງ ເຫດການທີ່ໃກ້ຈະເກີດຂຶ້ນກັບຜູ້ຜະລິດສິນຄ້າພາຍໃນ ຊຶ່ງຈະພາໃຫ້ມີຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ຢ່າງແນ່ນອນ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ

ລັດ ຊຸກຍູ້ ແລະ ສົ່ງເສີມ ວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ດ້ວຍການວາງນະໂຍບາຍ ແລະ ມາດຕະການ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂທີ່ເອື້ອອຳນວຍແກ່ຜູ້ຜະລິດສິນຄ້າພາຍໃນ ໃຫ້ສາມາດປັບປຸງຕົນເອງ ແລະ ແຂ່ງຂັນກັບການນຳເຂົ້າສິນຄ້າ.

ລັດ ສະໜອງງົບປະມານ, ບຸກຄະລາກອນ, ພາຫະນະ, ວັດຖຸປະກອນ ໃຫ້ແກ່ອົງການຮັບຜິດຊອບຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 5 ຫຼັກການກ່ຽວກັບການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ

ການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບນະໂຍບາຍ ແລະ ກົດໝາຍ;
2. ຮັບປະກັນຄວາມໂປ່ງໃສ, ພາວະວິໄສ ແລະ ຍຸຕິທຳ;
3. ນຳໃຊ້ມາດຕະການໃນກໍລະນີທີ່ຈຳເປັນໂດຍມີການກຳນົດເວລາທີ່ແນ່ນອນ ແລະ ບໍ່ເລືອກປະຕິບັດ;
4. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ດຳເນີນການຜະລິດສິນຄ້າຢູ່ພາຍໃນ ແລະ ຜູ້ນຳເຂົ້າສິນຄ້າ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ດ້ວຍການແລກປ່ຽນຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການກຳນົດ ແລະ ການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍ
### ໝວດທີ 1
### ການກຳນົດຄວາມເສຍຫາຍຂອງຜູ້ຜະລິດ ທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ

**ມາດຕາ 8 ຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ**

ຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນ ແມ່ນ ການສູນເສຍຜົນປະໂຫຍດທາງການຄ້າທີ່ໄດ້ຮັບຜົນກະທົບຮ້າຍແຮງໂດຍລວມ ຈາກການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍ ແລະ ເຮັດໃຫ້ຜູ້ຜະລິດສິນຄ້າພາຍໃນໄດ້ຮັບຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ເປັນໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ.

**ມາດຕາ 9 ການກຳນົດຄວາມເສຍຫາຍຢ່າງຫຼວງຫຼາຍ**

ໃນການກຳນົດຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜູ້ຜະລິດສິນຄ້າພາຍໃນ ໃຫ້ພິຈາລະນາຕາມແຕ່ລະປັດໄຈ ດັ່ງນີ້:

1. ອັດຕາ ແລະ ປະລິມານການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນຢ່າງເດັດຖານ ແລະ ທຽບຖານ;
2. ສ່ວນແບ່ງຕະຫຼາດຂອງຜູ້ຜະລິດສິນຄ້າພາຍໃນຫຼຸດລົງ;
3. ການປ່ຽນແປງຂອງລະດັບການຂາຍ;
4. ການປ່ຽນແປງຂອງລະດັບຜົນຜະລິດ;
5. ການປ່ຽນແປງຂອງລະດັບຜະລິດຕະພາບ;
6. ການປ່ຽນແປງຂອງລະດັບກຳລັງການຜະລິດ;
7. ການປ່ຽນແປງຂອງລະດັບກຳໄລ ຫຼື ຂາດທຶນ;
8. ການປ່ຽນແປງຂອງລະດັບການຈ້າງງານ;
9. ປັດໄຈອື່ນທີ່ກ່ຽວຂ້ອງ.

ຄວາມເສຍຫາຍທີ່ເກີດຈາກປັດໄຈອື່ນ ທີ່ບໍ່ແມ່ນຍ້ອນການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນ ບໍ່ຖືວ່າເປັນປັດໄຈຂອງຄວາມເສຍຫາຍຢ່າງຫຼວງຫຼາຍ.

ສຳລັບເນື້ອໃນລະອຽດຂອງ ແປດ ປັດໄຈຄວາມເສຍຫາຍ ແລະ ລະດັບຄວາມເສຍຫາຍຢ່າງຫຼວງຫຼາຍ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 10 ການກຳນົດໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ**

ການກຳນົດໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜູ້ຜະລິດສິນຄ້າພາຍໃນ ໃຫ້ອີງໃສ່ບັນດາປັດໄຈທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ

**ມາດຕາ 11 ການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ**

ການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ ແມ່ນ ການຊອກຫາຂໍ້ມູນເພື່ອຢັ້ງຢືນຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜູ້ຜະລິດສິນຄ້າພາຍໃນ ຍ້ອນການນໍາເຂົ້າສິນຄ້າທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍຜິດປົກກະຕິ.

ການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ ຈະດໍາເນີນໄດ້ກໍຕໍ່ເມື່ອມີສາເຫດໃດໜຶ່ງທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້.

ກະຊວງອຸດສາຫະກໍາ ແລະ ການຄ້າ ດໍາເນີນການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ ໂດຍມີການປະສານສົມທົບກັບ ກະຊວງ, ອົງການອື່ນທີ່ກ່ຽວຂ້ອງ ກ່ອນນໍາສະເໜີລັດຖະບານພິຈາລະນານໍາໃຊ້ມາດຕະການປົກປ້ອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

**ມາດຕາ 12 ສາເຫດທີ່ພາໃຫ້ມີການສືບຫາຂໍ້ມູນ**

ສາເຫດທີ່ພາໃຫ້ມີການສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ ມີ ດັ່ງນີ້:

1. ມີຄໍາຮ້ອງຂອງຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ຕາງໜ້າຜູ້ຜະລິດສິນຄ້າພາຍໃນ;
2. ມີການພົບເຫັນຂໍ້ມູນ ຫຼື ຫຼັກຖານກ່ຽວກັບຄວາມເສຍຫາຍຂອງຜູ້ຜະລິດສິນຄ້າພາຍໃນໂດຍເຈົ້າໜ້າທີ່ສືບຫາຂໍ້ມູນ.

**ມາດຕາ 13 ຄໍາຮ້ອງຂອງຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ຕາງໜ້າຜູ້ຜະລິດສິນຄ້າພາຍໃນ**

ຜູ້ຜະລິດສິນຄ້າພາຍໃນ ຫຼື ຜູ້ຕາງໜ້າຜູ້ຜະລິດສິນຄ້າພາຍໃນ ສາມາດຍື່ນຄໍາຮ້ອງຕໍ່ກະຊວງອຸດສາຫະກໍາ ແລະ ການຄ້າ ຕາມແບບພິມເພື່ອດໍາເນີນການສືບຫາຂໍ້ມູນຕາມປັດໄຈທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້.

ຄໍາຮ້ອງຕ້ອງປະກອບດ້ວຍເອກະສານທີ່ມີຂໍ້ມູນ ດັ່ງນີ້:

1. ຂໍ້ມູນກ່ຽວກັບສິນຄ້ານໍາເຂົ້າທີ່ເພີ່ມຂຶ້ນ;
2. ຂໍ້ມູນກ່ຽວກັບຜູ້ຜະລິດ, ຜູ້ສົ່ງອອກ ແລະ ຜູ້ນໍາເຂົ້າ;
3. ຄວາມກ່ຽວພັນລະຫວ່າງການນໍາເຂົ້າທີ່ເພີ່ມຂຶ້ນກັບຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ;
4. ແຜນປັບປຸງຂອງຜູ້ຜະລິດສິນຄ້າພາຍໃນ.

ພາຍຫຼັງໄດ້ຮັບຄໍາຮ້ອງແລ້ວ ເຈົ້າໜ້າທີ່ສືບຫາຂໍ້ມູນ ຕ້ອງພິຈາລະນາຂໍ້ມູນ ຫຼື ຫຼັກຖານໃຫ້ສໍາເລັດພາຍໃນ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງເປັນຕົ້ນໄປ, ຖ້າຫາກບໍ່ສາມາດສໍາເລັດໄດ້ພາຍໃນກໍານົດເວລາດັ່ງກ່າວ ເຈົ້າໜ້າທີ່ສືບຫາຂໍ້ມູນ ສາມາດສະເໜີຕໍ່ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາຕໍ່ເວລາ, ແຕ່ສາມາດຕໍ່ໄດ້ສູງສຸດບໍ່ເກີນ ສິບວັນ ລັດຖະການ.

ໃນກໍລະນີ ເຈົ້າໜ້າທີ່ສືບຫາຂໍ້ມູນ ບໍ່ພົບເຫັນຂໍ້ມູນຫຼັກຖານ ທີ່ຊີ້ໃຫ້ເຫັນການນໍາເຂົ້າສິນຄ້າທີ່ເພີ່ມຂຶ້ນ ແລະ ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ຜູ້ຜະລິດພາຍໃນ, ເຈົ້າໜ້າທີ່ສືບຫາຂໍ້ມູນ ຕ້ອງລາຍງານລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຊາບ ແລະ ແຈ້ງໃຫ້ຜູ້ຍື່ນຄໍາຮ້ອງກ່ຽວກັບຜົນການວິໄຈຂໍ້ມູນດັ່ງກ່າວ.

ໃນກໍລະນີ ເຈົ້າໜ້າທີ່ສືບຫາຂໍ້ມູນພົບເຫັນຂໍ້ມູນຫຼັກຖານ ທີ່ຢັ້ງຢືນມີການນໍາເຂົ້າສິນຄ້າທີ່ເພີ່ມຂຶ້ນ ແລະ ໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ຜູ້ຜະລິດສິນຄ້າພາຍໃນ, ເຈົ້າໜ້າທີ່ສືບຫາຂໍ້ມູນ ຕ້ອງລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ.

**ມາດຕາ 14 ການພົບເຫັນຂໍ້ມູນ ຫຼື ຫຼັກຖານໂດຍເຈົ້າໜ້າທີ່ສືບຫາຂໍ້ມູນ**

ເມື່ອເຈົ້າໜ້າທີ່ສືບຫາຂໍ້ມູນ ຫາກພົບເຫັນຂໍ້ມູນ ຫຼື ຫຼັກຖານທີ່ຊີ້ໃຫ້ເຫັນການນໍາເຂົ້າສິນຄ້າທີ່ເພີ່ມຂຶ້ນ ຊຶ່ງໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ມີໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍນັ້ນ ເຈົ້າໜ້າທີ່ສືບຫາຂໍ້ມູນ ຕ້ອງລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ.

**ມາດຕາ 15 ຂັ້ນຕອນການດໍາເນີນການສືບຫາຂໍ້ມູນ**

ການດໍາເນີນການສືບຫາຂໍ້ມູນໃຫ້ດໍາເນີນຕາມຂັ້ນຕອນ ດັ່ງນີ້:

1. ອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ;
2. ດໍາເນີນການສືບຫາຂໍ້ມູນ;
3. ສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນ.

**ມາດຕາ 16 ການອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ**

ພາຍຫຼັງໄດ້ຮັບບົດລາຍງານຈາກເຈົ້າໜ້າທີ່ສືບຫາຂໍ້ມູນ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ພິຈາລະນາອອກຂໍ້ຕົກລົງ ໃຫ້ດໍາເນີນການສືບຫາຂໍ້ມູນ ພ້ອມທັງແຕ່ງຕັ້ງຄະນະສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ.

ຄະນະສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ ປະກອບດ້ວຍ ເຈົ້າໜ້າທີ່ສືບຫາຂໍ້ມູນ, ພະນັກງານຂອງຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ຜູ້ຕາງໜ້າຈາກພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 17 ການດໍາເນີນການສືບຫາຂໍ້ມູນ**

ພາຍຫຼັງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນ ຄະນະສືບຫາຂໍ້ມູນ ຕ້ອງດໍາເນີນຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງໃຫ້ປະເທດສົ່ງອອກ, ຜູ້ຍື່ນຄໍາຮ້ອງ, ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງຮັບຊາບກ່ອນການດໍາເນີນການສືບຫາຂໍ້ມູນ;
2. ເຜີຍແຜ່ຂໍ້ຕົກລົງໃຫ້ດໍາເນີນການສືບຫາຂໍ້ມູນໃນສື່ໃດໜຶ່ງ ເພື່ອໃຫ້ສັງຄົມຮັບຊາບຢ່າງກວ້າງຂວາງ;
3. ປຶກສາຫາລືກັບຜູ້ມີສ່ວນກ່ຽວຂ້ອງ ເພື່ອໃຫ້ພວກກ່ຽວສະແດງຫຼັກຖານ, ເອກະສານ ແລະ ຄວາມເຫັນກ່ຽວກັບການນໍາໃຊ້ມາດຕະການປົກປ້ອງ ເພື່ອຮັບປະກັນຜົນປະໂຫຍດຂອງສາທາລະນະ;
4. ເກັບກໍາຂໍ້ມູນຢູ່ສະຖານທີ່ຕ່າງໆທີ່ກ່ຽວຂ້ອງເພື່ອຢັ້ງຢືນຄວາມຖືກຕ້ອງ ແລະ ຄວາມເປັນຈິງກ່ຽວກັບຜົນກະທົບຈາກການນໍາເຂົ້າສິນຄ້າ.

ການສືບຫາຂໍ້ມູນ ຕ້ອງໃຫ້ສໍາເລັດພາຍໃນເວລາບໍ່ເກີນ ໜຶ່ງຮ້ອຍແປດສິບວັນ ນັບແຕ່ວັນທີ່ໄດ້ອອກຂໍ້ຕົກລົງເປັນຕົ້ນໄປ, ຖ້າຫາກບໍ່ສາມາດສໍາເລັດຕາມກໍານົດເວລາດັ່ງກ່າວຄະນະສືບຫາຂໍ້ມູນ ສາມາດສະເໜີລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອພິຈາລະນາຕໍ່ກໍານົດເວລາ ແຕ່ຕໍ່ໄດ້ສູງສຸດບໍ່ໃຫ້ເກີນ ຫົກສິບວັນ.

**ມາດຕາ 18 ການສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນ**

ພາຍຫຼັງໄດ້ສໍາເລັດການສືບຫາຂໍ້ມູນແລ້ວ ຄະນະສືບຫາຂໍ້ມູນ ຕ້ອງສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນພ້ອມດ້ວຍຂໍ້ມູນຫຼັກຖານທັງໝົດທີ່ເກັບກໍາໄດ້ຕໍ່ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອນໍາສະເໜີຕໍ່ລັດຖະບານ ພິຈາລະນາຕົກລົງນໍາໃຊ້ ຫຼື ບໍ່ນໍາໃຊ້ມາດຕະການປົກປ້ອງ.

**ມາດຕາ 19 ການຍົກເລີກການດໍາເນີນການສືບຫາຂໍ້ມູນ**

ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງໃຫ້ຍົກເລີກການດໍາເນີນການສືບຫາຂໍ້ມູນໃນກໍລະນີ ດັ່ງນີ້:

1. ຜູ້ຮ້ອງຂໍຖອນຄໍາຮ້ອງຂອງຕົນ;
2. ບໍ່ມີຄວາມກ່ຽວພັນລະຫວ່າງການນໍາເຂົ້າສິນຄ້າທີ່ເພີ່ມຂຶ້ນ ກັບຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ;
3. ເຫດຜົນອື່ນ.

ພາຍຫຼັງອອກຂໍ້ຕົກລົງໃຫ້ຍົກເລີກການດໍາເນີນການສືບຫາຂໍ້ມູນ ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງແຈ້ງໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງ ພ້ອມທັງເຜີຍແຜ່ໃຫ້ສັງຄົມຊາບ.

**ມາດຕາ 20 ການຮັກສາຂໍ້ມູນທີ່ເປັນຄວາມລັບ**

ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ຕ້ອງເກັບຮັກສາຂໍ້ມູນທີ່ເປັນຄວາມລັບ ຫຼື ຂໍ້ມູນທີ່ຜູ້ສະໜອງສະເໜີໃຫ້ເປັນຄວາມລັບ ແລະ ບໍ່ສາມາດເປີດເຜີຍຕໍ່ສັງຄົມໄດ້ ຖ້າບໍ່ໄດ້ຮັບອະນຸຍາດຈາກຜູ້ສະໜອງຂໍ້ມູນ.

ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ອາດຮຽກຮ້ອງໃຫ້ຜູ້ສະໜອງຂໍ້ມູນສະຫຼຸບຫຍໍ້ກ່ຽວກັບຂໍ້ມູນທີ່ສາມາດເປີດເຜີຍໄດ້, ຖ້າຜູ້ສະໜອງບໍ່ສາມາດສະຫຼຸບຫຍໍ້ໄດ້ກໍຕ້ອງໃຫ້ເຫດຜົນ.

ຖ້າເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ຫາກເຫັນວ່າການຮ້ອງຂໍໃຫ້ຮັກສາຂໍ້ມູນເປັນຄວາມລັບນັ້ນບໍ່ມີເຫດຜົນພຽງພໍ ແລະ ຜູ້ສະໜອງຂໍ້ມູນບໍ່ເຫັນດີໃຫ້ເປີດເຜີຍຕໍ່ສັງຄົມ ຫຼື ບໍ່ສາມາດສັງລວມຫຍໍ້ ໂດຍບໍ່ມີເຫດຜົນພຽງພໍເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ອາດຈະບໍ່ນໍາເອົາຂໍ້ມູນນັ້ນມາປະກອບການພິຈາລະນາເວັ້ນເສຍແຕ່ຈະມີການພິສູດຈາກແຫຼ່ງຂໍ້ມູນອື່ນວ່າຂໍ້ມູນນັ້ນເປັນຂໍ້ມູນທີ່ຖືກຕ້ອງ.

**ມາດຕາ 21 ຄວາມຮັບຜິດຊອບໃນການດໍາເນີນການສືບຫາຂໍ້ມູນ**

ຄ່າໃຊ້ຈ່າຍໃນການດໍາເນີນການສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ ໃຫ້ນໍາໃຊ້ງົບປະມານຂອງລັດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 22 ເຈົ້າໜ້າທີ່ສືບຫາຂໍ້ມູນ**

ເຈົ້າໜ້າທີ່ສືບຫາຂໍ້ມູນ ແມ່ນ ພະນັກງານ-ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງໂດຍລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຮັບຜິດຊອບວຽກງານສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ ຕາມທີ່ໄດ້ກໍານົດໃນກົດໝາຍສະບັບນີ້.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສືບຫາຂໍ້ມູນ**

ເຈົ້າໜ້າທີ່ສືບຫາຂໍ້ມູນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກໍາ ແລະ ວິເຄາະຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າທີ່ເພີ່ມຂຶ້ນ;

2. ສືບຖາມ, ຮຽກເອົາຂໍ້ມູນຈາກຜູ້ຮ້ອງຂໍ, ຜູ້ນຳເຂົ້າ ແລະ ຜູ້ຜະລິດສິນຄ້າພາຍໃນ ກ່ຽວກັບຄວາມເສຍຫາຍຈາກການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນ;

3. ສະຫຼຸບ ແລະ ລາຍງານຜົນການສືບຫາຂໍ້ມູນ ກ່ຽວກັບຄວາມເສຍຫາຍຈາກການນຳເຂົ້າສິນຄ້າ ຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າເພື່ອພິຈາລະນາ;

4. ຄົ້ນຄວ້າ ແລະ ສະເໜີກ່ຽວກັບການຍົກເລີກ ຫຼື ຂະຫຍາຍໄລຍະເວລາການນຳໃຊ້ມາດຕະການປົກປ້ອງຜົນກະທົບຈາກການນຳເຂົ້າສິນຄ້າ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ III
## ມາດຕະການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ

### ໝວດທີ 1
### ປະເພດຂອງມາດຕະການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ

**ມາດຕາ 24 ປະເພດຂອງມາດຕະການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ**

ມາດຕະການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ມີ ສອງ ປະເພດ ດັ່ງນີ້:

1. ມາດຕະການປົກປ້ອງຊົ່ວຄາວ;
2. ມາດຕະການປົກປ້ອງທົ່ວໄປ.

**ມາດຕາ 25 ມາດຕະການປົກປ້ອງຊົ່ວຄາວ**

ມາດຕະການປົກປ້ອງຊົ່ວຄາວ ແມ່ນ ມາດຕະການທີ່ນຳໃຊ້ຕໍ່ຜູ້ນຳເຂົ້າສິນຄ້າໃນໄລຍະດຳເນີນການສືບຫາຂໍ້ມູນ ໂດຍໃຫ້ຜູ້ກ່ຽວວາງເງິນຄ້ຳປະກັນຕາມລະບຽບການໄວ້ນຳກະຊວງການເງິນ.

**ມາດຕາ 26 ມາດຕະການປົກປ້ອງທົ່ວໄປ**

ມາດຕະການປົກປ້ອງທົ່ວໄປ ແມ່ນ ມາດຕະການທີ່ນຳໃຊ້ຕໍ່ຜູ້ນຳເຂົ້າສິນຄ້າ ພາຍຫຼັງສຳເລັດການສືບຫາຂໍ້ມູນທີ່ເຫັນວ່າມີຜົນກະທົບຕໍ່ສິນຄ້າປະເພດດຽວຢ່າງຫຼວງຫຼາຍ ຕາມປັດໄຈທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ດ້ວຍການກຳນົດປະລິມານການນຳເຂົ້າ ຫຼື ການເພີ່ມອັດຕາພາສີຕໍ່ສິນຄ້ານຳເຂົ້າ.

### ໝວດທີ 2
### ການນຳໃຊ້ມາດຕະການປົກປ້ອງຊົ່ວຄາວ

**ມາດຕາ 27 ການນຳໃຊ້ມາດຕະການປົກປ້ອງຊົ່ວຄາວ**

ໃນໄລຍະດຳເນີນການສືບຫາຂໍ້ມູນ ຖ້າມີຫຼັກຖານຢັ້ງຢືນວ່າການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນ ໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ຈະເປັນໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜູ້ຜະລິດສິນຄ້າພາຍໃນ ຫຼື ຖ້າຊັກຊ້າໃນການດຳເນີນການ ຈະສ້າງຄວາມເສຍຫາຍຢ່າງຫຼວງຫຼາຍທີ່ຍາກຈະແກ້ໄຂນັ້ນ ຄະນະສືບຫາຂໍ້ມູນຕ້ອງລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໂດຍທັນທີ ເພື່ອສະເໜີຕໍ່ລັດຖະບານພິຈາລະນານຳໃຊ້ມາດຕະການປົກປ້ອງຊົ່ວຄາວ.

ພາຍຫຼັງທີ່ລັດຖະບານ ໄດ້ຕົກລົງນໍາໃຊ້ມາດຕະການປົກປ້ອງຊົ່ວຄາວແລ້ວ ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຕ້ອງຈັດຕັ້ງປະຕິບັດມາດຕະການດັ່ງກ່າວ.

ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງແຈ້ງກ່ຽວກັບການນໍາໃຊ້ມາດຕະການປົກປ້ອງຊົ່ວຄາວໃຫ້ອົງການການຄ້າໂລກ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ.

**ມາດຕາ 28 ກໍານົດເວລາການນໍາໃຊ້ມາດຕະການປົກປ້ອງຊົ່ວຄາວ**

ການນໍາໃຊ້ມາດຕະການປົກປ້ອງຊົ່ວຄາວ ມີກໍານົດເວລາບໍ່ໃຫ້ເກີນ ສອງຮ້ອຍວັນ ນັບແຕ່ວັນທີ່ອອກຂໍ້ຕົກລົງນໍາໃຊ້ມາດຕະການດັ່ງກ່າວເປັນຕົ້ນໄປ ແລະ ສິ້ນສຸດ ພາຍຫຼັງສໍາເລັດການສືບຫາຂໍ້ມູນ ຫຼື ຄົບຕາມກໍານົດເວລາຂອງການນໍາໃຊ້ມາດຕະການດັ່ງກ່າວ.

**ມາດຕາ 29 ການຍົກເລີກມາດຕະການປົກປ້ອງຊົ່ວຄາວ**

ລັດຖະບານ ຈະພິຈາລະນາຍົກເລີກມາດຕະການປົກປ້ອງຊົ່ວຄາວ ກ່ອນກໍານົດເວລາທີ່ກໍານົດໄວ້ໃນມາດຕາ 28 ຖ້າວ່າການສືບຫາຂໍ້ມູນ ຫາກພົບວ່າການນໍາເຂົ້າສິນຄ້າທີ່ເພີ່ມຂຶ້ນນັ້ນ ບໍ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ບໍ່ເປັນໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ຕາມການສະເໜີຂອງກະຊວງອຸດສາຫະກໍາ ແລະ ການຄ້າ.

ການຍົກເລີກການນໍາໃຊ້ມາດຕະການປົກປ້ອງຊົ່ວຄາວ ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງແຈ້ງໃຫ້ຜູ້ມີສ່ວນກ່ຽວຂ້ອງ ແລະ ກະຊວງການເງິນ ຕ້ອງສົ່ງເງິນຄໍ້າປະກັນຄືນໃຫ້ຜູ້ນໍາເຂົ້າສິນຄ້າທີ່ວາງເງິນຄໍ້າປະກັນໂດຍທັນທີ.

## ໝວດທີ 3
## ການນໍາໃຊ້ມາດຕະການປົກປ້ອງທົ່ວໄປ

**ມາດຕາ 30 ການນໍາໃຊ້ມາດຕະການປົກປ້ອງທົ່ວໄປ**

ພາຍຫຼັງສໍາເລັດການສືບຫາຂໍ້ມູນ ແລະ ມີຜົນການສືບຫາຂໍ້ມູນ ຢັ້ງຢືນວ່າການນໍາເຂົ້າສິນຄ້າທີ່ເພີ່ມຂຶ້ນໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຫຼື ເປັນໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜູ້ຜະລິດສິນຄ້າພາຍໃນນັ້ນ ຄະນະສືບຫາຂໍ້ມູນຕ້ອງລາຍງານລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອສະເໜີຕໍ່ລັດຖະບານພິຈາລະນານໍາໃຊ້ມາດຕະການປົກປ້ອງທົ່ວໄປ.

ພາຍຫຼັງໄດ້ຮັບໜັງສືຈາກກະຊວງອຸດສາຫະກໍາ ແລະ ການຄ້າ ລັດຖະບານຕ້ອງພິຈາລະນາຕົກລົງນໍາໃຊ້ມາດຕະການປົກປ້ອງທົ່ວໄປ ພາຍໃນເວລາ ສິບຫ້າວັນ ລັດຖະການ ດ້ວຍການກໍານົດປະລິມານການນໍາເຂົ້າ ແລະ ມອບໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ຈັດຕັ້ງປະຕິບັດ. ການກໍານົດປະລິມານການນໍາເຂົ້າ ຕ້ອງບໍ່ເຮັດໃຫ້ປະລິມານການນໍາເຂົ້າຫຼຸດລົງຕໍ່າກວ່າປະລິມານການນໍາເຂົ້າໃນໄລຍະ ສາມປີ ສຸດທ້າຍທີ່ຜ່ານມາໂດຍສະເລ່ຍ, ເວັ້ນເສຍແຕ່ມີເຫດຜົນຢັ້ງຢືນວ່າຕ້ອງໄດ້ຫຼຸດປະລິມານການນໍາເຂົ້າຕໍ່າກວ່ານັ້ນ ຈຶ່ງຈະສາມາດແກ້ໄຂຜົນກະທົບໄດ້.

ສໍາລັບມາດຕະການເພີ່ມອັດຕາພາສີ ກະຊວງການເງິນ ຄົ້ນຄວ້າພິຈາລະນາການສະເໜີຂອງກະຊວງອຸດສາຫະກໍາ ແລະ ການຄ້າ ແລ້ວສະເໜີຕໍ່ລັດຖະບານ ເພື່ອນໍາສະເໜີຕໍ່ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາຕົກລົງ.

ມາດຕະການປົກປ້ອງທົ່ວໄປ ຈະນຳໃຊ້ໃນເວລາຈຳເປັນເທົ່ານັ້ນ. ມາດຕະການດັ່ງກ່າວຫາກນຳໃຊ້ເກີນກວ່າ ໜຶ່ງປີ ໃຫ້ຫຼຸດລະດັບການນຳໃຊ້ມາດຕະການປົກປ້ອງທົ່ວໄປເປັນແຕ່ລະໄລຍະ.

ກະຊວງອຸດສາຫະກຳ ແລະ ການຄ້າ ມີໜ້າທີ່ແຈ້ງກ່ຽວກັບການນຳໃຊ້ມາດຕະການປົກປ້ອງທົ່ວໄປໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍໄວ.

**ມາດຕາ 31 ໄລຍະເວລາການນຳໃຊ້ມາດຕະການປົກປ້ອງທົ່ວໄປ**

ໄລຍະເວລາການນຳໃຊ້ມາດຕະການປົກປ້ອງທົ່ວໄປ ບໍ່ໃຫ້ເກີນ ສີ່ປີ ນັບແຕ່ເວລານຳໃຊ້ມາດຕະການປົກປ້ອງຊົ່ວຄາວ ເວັ້ນເສຍແຕ່ມີການຕໍ່ເວລາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຂອງກົດໝາຍສະບັບນີ້.

**ມາດຕາ 32 ການທົບທວນຄືນມາດຕະການປົກປ້ອງທົ່ວໄປ**

ມາດຕະການປົກປ້ອງທົ່ວໄປ ທີ່ມີອາຍຸການນຳໃຊ້ເກີນກວ່າ ສາມປີ ນັ້ນ ພາຍຫຼັງນຳໃຊ້ໄດ້ເຄິ່ງໜຶ່ງ ຂອງໄລຍະເວລາແລ້ວ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງທົບທວນຄືນການນຳໃຊ້ມາດຕະການດັ່ງກ່າວ ແລະ ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາວ່າຈະຮັກສາ, ຫຼຸດຜ່ອນ ຫຼື ຍົກເລີກ.

ກະຊວງອຸດສາຫະກຳ ແລະ ການຄ້າ ມີໜ້າທີ່ແຈ້ງຜົນການທົບທວນຄືນມາດຕະການປົກປ້ອງທົ່ວໄປ ແລະ ການຕົກລົງຂອງລັດຖະບານ ໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍໄວ.

**ມາດຕາ 33 ການຕໍ່ໄລຍະເວລາຂອງການນຳໃຊ້ມາດຕະການປົກປ້ອງທົ່ວໄປ**

ມາດຕະການປົກປ້ອງທົ່ວໄປ ສາມາດຕໍ່ໄດ້ສອງຄັ້ງ ຄື ຄັ້ງທີ່ໜຶ່ງ ບໍ່ເກີນ ສີ່ປີ ແລະ ຄັ້ງທີສອງ ບໍ່ເກີນ ສອງປີ, ແຕ່ກ່ອນໝົດກຳນົດເວລາ ຫົກເດືອນ ຜູ້ຜະລິດສິນຄ້າພາຍໃນ ຕ້ອງສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຕໍ່ໄລຍະເວລາຂອງການນຳໃຊ້ມາດຕະການດັ່ງກ່າວ.

ພາຍຫຼັງໄດ້ຮັບການສະເໜີຈາກຜູ້ຜະລິດສິນຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງຄົ້ນຄວ້າພິຈາລະນາ ພາຍໃນເວລາ ສິບຫ້າວັນ ລັດຖະການ, ຖ້າເຫັນວ່າມີຄວາມຈຳເປັນສືບຕໍ່ນຳໃຊ້ມາດຕະການດັ່ງກ່າວໃຫ້ສະເໜີຕໍ່ ລັດຖະບານພິຈາລະນາ.

ໃນກໍລະນີ ມີການຕໍ່ເວລານຳໃຊ້ມາດຕະການປົກປ້ອງທົ່ວໄປ ຕ້ອງຫຼຸດລະດັບຄວາມເຂັ້ມງວດຂອງການນຳໃຊ້ມາດຕະການດັ່ງກ່າວ.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງກ່ຽວກັບການຕໍ່ເວລາການນຳໃຊ້ມາດຕະການປົກປ້ອງທົ່ວໄປໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍໄວ.

**ມາດຕາ 34 ການນຳໃຊ້ມາດຕະການປົກປ້ອງທົ່ວໄປຄືນໃໝ່**

ມາດຕະການປົກປ້ອງທົ່ວໄປ ທີ່ໄດ້ສິ້ນສຸດລົງ ແຕ່ຍັງສືບຕໍ່ມີຄວາມເສຍຫາຍແກ່ຜູ້ຜະລິດພາຍໃນ ຈຶ່ງສາມາດນຳໃຊ້ຄືນໃໝ່ໄດ້ອີກຕໍ່ສິນຄ້າທີ່ຖືກມາດຕະການດັ່ງກ່າວ ພາຍຫຼັງທີ່ໄດ້ຜ່ານໄລຍະເວລາເຄິ່ງໜຶ່ງຂອງໄລຍະການນຳໃຊ້ມາດຕະການຜ່ານມາແຕ່ຢ່າງໜ້ອຍບໍ່ໃຫ້ຫຼຸດ ສອງປີ.

ສຳລັບມາດຕະການປົກປ້ອງ ທີ່ມີໄລຍະບໍ່ເກີນ ຮ້ອຍແປດສິບວັນ ນັ້ນອາດນຳໃຊ້ຕໍ່ສິນຄ້ານຳເຂົ້າຄືນໃໝ່ໄດ້ອີກ ເມື່ອໄດ້ນຳໃຊ້ຢ່າງໜ້ອຍ ໜຶ່ງປີ ແຕ່ບໍ່ໃຫ້ນຳໃຊ້ຕໍ່ສິນຄ້າດັ່ງກ່າວເກີນກວ່າ ສອງຄັ້ງ ພາຍໃນໄລຍະເວລາ ຫ້າປີ.

**ມາດຕາ 35 ການແກ້ໄຂຜົນກະທົບຈາກການນຳໃຊ້ມາດຕະການປົກປ້ອງທົ່ວໄປ**

ໃນກໍລະນີ ມີການນຳໃຊ້ ຫຼື ມີການຕໍ່ໄລຍະເວລາຂອງການນຳໃຊ້ມາດຕະການປົກປ້ອງທົ່ວໄປເກີນ ສາມ ປີ, ລັດຖະບານ ສປປ ລາວ ອາດປຶກສາຫາລືກັບປະເທດ ຜູ້ສົ່ງອອກ ທີ່ຄາດວ່າຈະໄດ້ຮັບຜົນກະທົບຈາກມາດຕະ ການດັ່ງກ່າວ ໂດຍຮັກສາລະດັບການຫຼຸດຜ່ອນພາສີ ໃຫ້ເທົ່າກັບລະດັບທີ່ມີຢູ່ໃນພັນທະຂອງ ສປປ ລາວ ທີ່ມີຕໍ່ ອົງການການຄ້າໂລກ.

**ມາດຕາ 36 ການບໍ່ນຳໃຊ້ມາດຕະການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ**

ມາດຕະການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ຈະບໍ່ຖືກນຳໃຊ້ໃນກໍລະນີ ດັ່ງນີ້:

1. ສ່ວນແບ່ງການນຳເຂົ້າສິນຄ້າຈາກປະເທດກຳລັງພັດທະນາ ທີ່ເປັນສະມາຊິກຂອງອົງການການຄ້າ ໂລກ ຫາກບໍ່ເກີນ ສາມສ່ວນຮ້ອຍ ຂອງການນຳເຂົ້າສິນຄ້າທັງໝົດທີ່ຖືກສືບຫາຂໍ້ມູນ ຫຼື ສ່ວນແບ່ງການນຳເຂົ້າ ທັງໝົດຈາກປະເທດກຳລັງພັດທະນາ ລວມກັນຫາກບໍ່ເກີນ ເກົ້າສ່ວນຮ້ອຍ;

2. ການນຳໃຊ້ມາດຕະການປົກປ້ອງນັ້ນ ຫາກເຫັນວ່າ ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມພາຍ ໃນປະເທດ.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງໃຫ້ອົງການການຄ້າໂລກ ແລະ ຜູ້ມີສ່ວນກ່ຽວຂ້ອງ ກ່ຽວກັບການບໍ່ນຳໃຊ້ມາດຕະການດັ່ງກ່າວ.

## ພາກທີ IV
## ຂໍ້ຫ້າມ

**ມາດຕາ 37 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການປົກປ້ອງຜູ້ ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ;

2. ເປັນສື່ກາງໃຫ້ ຫຼື ຮັບສິນບົນ ເພື່ອຜົນປະໂຫຍດຂອງຕົນ, ພັກພວກ, ຈຸ້ມເຈື້ອ ແລະ ການຈັດ ຕັ້ງ ຫຼື ບຸກຄົນໃດໜຶ່ງ;

3. ຂັດຂວາງການເຮັດວຽກຂອງເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 38 ຂໍ້ຫ້າມສຳລັບຜູ້ຜະລິດສິນຄ້າພາຍໃນ**

ຫ້າມຜູ້ຜະລິດສິນຄ້າພາຍໃນ ມີພຶດຕິກຳ ດັ່ງນີ້:

1. ໃສ່ຮ້າຍປ້າຍສີ ຜູ້ນຳເຂົ້າສິນຄ້າປະເພດດຽວກັນ, ປອມແປງ, ບິດເບືອນ ຫຼື ສະໜອງຂໍ້ມູນ ທີ່ບໍ່ ຖືກຕ້ອງຕາມຄວາມເປັນຈິງໃຫ້ແກ່ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ;

2. ໃຫ້ສິນບົນ ແກ່ພະນັກງານ ແລະ ບຸກຄົນ ທີ່ກ່ຽວຂ້ອງກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນ ກະທົບຈາກການນຳເຂົ້າສິນຄ້າ;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 39 ຂໍ້ຫ້າມສຳລັບເຈົ້າໜ້າທີ່, ຄະນະສືບຫາຂໍ້ມູນ ແລະ ພະນັກງານທີ່ກ່ຽວຂ້ອງ**

ຫ້າມເຈົ້າໜ້າທີ່, ຄະນະສືບຫາຂໍ້ມູນ ແລະ ພະນັກງານ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດຂອງຕົນ, ພັກພວກ, ຈຸ້ມເຈື້ອ ແລະ ການຈັດຕັ້ງ ຫຼື ບຸກຄົນໃດໜຶ່ງ;
2. ຮັບສິນບົນຈາກຜູ້ຜະລິດສິນຄ້າພາຍໃນ ຫຼື ຈາກຜູ້ນຳເຂົ້າສິນຄ້າ;
3. ເປີດເຜີຍຂໍ້ມູນ, ເອກະສານທີ່ເປັນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;
4. ແກ່ຍາວເວລາໃນການພິຈາລະນາເອກະສານຕ່າງໆ ໂດຍບໍ່ມີເຫດຜົນ ຫຼື ກົດໜ່ວງເອກະສານຂອງຜູ້ຜະລິດສິນຄ້າພາຍໃນ ທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ;
5. ສົມຮູ້ຮ່ວມຄິດກັບຜູ້ຜະລິດສິນຄ້າພາຍໃນ ເພື່ອປົກປິດເຊື່ອງອຳຂໍ້ມູນຫຼັກຖານຕ່າງໆ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ V
## ການຄຸ້ມຄອງ ແລະ ການກວດກາ
### ໝວດທີ 1
### ການຄຸ້ມຄອງວຽກງານປົກປ້ອງຜູ້ຜະລິດ ທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ

**ມາດຕາ 40 ອົງການຄຸ້ມຄອງວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ປະກອບດ້ວຍ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;
2. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 41 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ;

4. ຄົ້ນຄວ້າ ແລະ ສະເໜີຕໍ່ ລັດຖະບານ ພິຈາລະນາຕົກລົງນໍາໃຊ້ມາດຕະການປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ;

5. ອອກຂໍ້ຕົກລົງ, ຄໍາສັ່ງ ແລະ ຄໍາແນະນໍາ ກ່ຽວກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ ທີ່ໄດ້ຮັບຄວາມເສຍຫາຍຈາກການນໍາເຂົ້າສິນຄ້າ;

6. ສ້າງ, ບໍາລຸງ ແລະ ຍົກລະດັບພະນັກງານ-ລັດຖະກອນ ກ່ຽວກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ

7. ແຕ່ງຕັ້ງ ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນກ່ຽວກັບຄວາມເສຍຫາຍ ກ່ຽວກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ;

8. ປຶກສາຫາລື ແລະ ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

9. ພົວພັນຮ່ວມມື ແລະ ແລກປ່ຽນປະສົບການກັບສາກົນ ກ່ຽວກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ;

10. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ ຕໍ່ລັດຖະບານຢ່າງເປັນປົກກະຕິ;

11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 42 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນດໍາເນີນງານ ກ່ຽວກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າໃຫ້ແກ່ສັງຄົມ;

3. ອໍານວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ແລະ ຄະນະສືບຫາຂໍ້ມູນ ໃນການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ;

4. ຮັບການສະເໜີ ແລະ ການແຈ້ງຂໍ້ມູນກ່ຽວກັບວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອລາຍງານກະຊວງອຸດສາຫະກໍາ ແລະ ການຄ້າພິຈາລະນາແກ້ໄຂ;

5. ຕິດຕາມກວດກາການປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບຜົນກະທົບຈາກການນໍາເຂົ້າສິນຄ້າ;

6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນໍາເຂົ້າສິນຄ້າ ໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;